144
16/6/2010

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ

ເລກທີ 293 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 15.06.2010

# ດໍາລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກໍາມະການອ່າງແມ່ນໍ້າ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ (ສະບັບປັບປຸງ) ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນ ແຫຼ່ງນໍ້າ, ສະບັບ ເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996;
- ອີງຕາມ ດໍາລັດ ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການ ຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ, ສະບັບເລກທີ 149/ນຍ, ລົງວັນທີ 10 ພຶດສະພາ 2009;
- ອີງຕາມ ໜັງສືສະເໜີ ຂອງ ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ, ຫົວໜ້າ ອົງການ ຊັບພະຍາກອນ ນໍ້າ ແລະ ສິ່ງແວດລ້ອມ ສະບັບເລກທີ 662/ສນຍ-ອນສ, ລົງວັນທີ 11 ມີນາ 2010;
- ອີງຕາມ ໜັງສືສະເໜີ ຂອງ ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ, ຫົວໜ້າ ທະບວງການ ປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 42/ທປຄ, ລົງວັນທີ 25 ມີນາ 2010.

### ນາຍົກລັດຖະມົນຕີ ອອກດໍາລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດ ສະບັບນີ້ ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ຄະນະກໍາມະການອ່າງແມ່ນໍ້າ ໂດຍລວມເພື່ອເປັນບ່ອນອີງໃຫ້

ແກ່ການຈັດຕັ້ງ ແລະເຄື່ອນໄຫວຂອງຄະນະກຳມະການອ່າງແມ່ນ້ຳແຕ່ລະອ່າງໃນ ສປປ ລາວ ແນໃສ່:

- ຮັບປະກັນການຈັດສັນຊັບພະຍາກອນນ້ຳ ແບບມີສ່ວນຮ່ວມ ແລະ ມີຄວາມຍືນຍົງ;
- ຫຼຸດຜ່ອນຜົນກະທົບຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ເກີດຈາກໄພພິບັດທາງນ້ຳ;
- ຄຸ້ມຄອງຊັບພະຍາກອນນ້ຳ ໃຫ້ມີຄຸນນະພາບທີ່ດີ;
- ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ປັບປຸງຊີວິດການເປັນຢູ່ຂອງ ປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

### ມາດຕາ 2. ຫຼັກການ

ຄະນະກຳມະການ ອ່າງແມ່ນ້ຳ ແຕ່ລະອ່າງ ເຄື່ອນໄຫວຕາມ ຫຼັກການ ດັ່ງຕໍ່ໄປນີ້:

- ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ໂດຍຜ່ານຂະບວນການປຶກສາຫາລື ແລະ ມີສ່ວນຮ່ວມໃນການພັດທະນາ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງອື່ນໆໃນຂອບເຂດອ່າງແມ່ນ້ຳລະຫວ່າງທຸກພາກສ່ວນ, ລວມທັງອົງການຈັດຕັ້ງ ຂອງລັດ, ເອກະຊົນ ແລະ ຊຸມຊົນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ;
- ການຮັບປະກັນຄວາມເປັນທຳໃນການນຳໃຊ້ນ້ຳ ແລະ ຄວາມຍືນຍົງ ຂອງ ລະບົບນິເວດ;
- ການນຳໃຊ້ກົນໄກວ່າດ້ວຍຜູ້ສ້າງມົນລະພິດ ຕ້ອງເປັນຜູ້ຈ່າຍ.

### ມາດຕາ 3. ນິຍາມຄຳສັບ

- **ການຄຸ້ມຄອງຊັບພະຍາກອນນ້ຳ** ແບບປະສົມປະສານ ໝາຍເຖິງຂະບວນການອັນໜຶ່ງ ສົ່ງເສີມການປະສານງານການພັດທະນາ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ, ຊັບພະຍາກອນທີ່ດິນ ແລະ ຊັບພະຍາກອນອື່ນໆ ທີ່ກ່ຽວຂ້ອງ ແນໃສ່ໃຫ້ໄດ້ ຮັບຜົນປະໂຫຍດສູງສຸດ ດ້ານເສດຖະກິດ -ສັງຄົມ ດ້ວຍຄວາມເປັນທຳ ແລະ ບໍ່ສົ່ງຜົນກະທົບຕໍ່ຄວາມຍືນຍົງ ຂອງລະບົບນິເວດ;
- **ການພັດທະນາຊັບພະຍາກອນນ້ຳ** ໝາຍເຖິງຂະບວນການວາງແຜນ, ອອກແບບ, ສ້າງ ແລະ ຈັດຕັ້ງ ປະຕິບັດໂຄງການ ເພື່ອການນຳໃຊ້ຊັບພະຍາກອນນ້ຳ;
- **ການນຳໃຊ້ຊັບພະຍາກອນນ້ຳ** ໝາຍເຖິງການເອົານ້ຳ, ການນຳໃຊ້ນ້ຳຈາກແຫຼ່ງນ້ຳໜ້າດິນ, ແຫຼ່ງນ້ຳໃຕ້ດິນ ແລະ ແຫຼ່ງນ້ຳໃນອາກາດ; ການປ່ອຍນ້ຳລົງສູ່ແຫຼ່ງນ້ຳເຫຼົ່ານັ້ນ; ການເກັບ ຫຼື ປ່ຽນແປງເວລາການໄຫຼ, ປະລິມານການໄຫຼ ຫຼື ຄຸນນະພາບນ້ຳໃນແຫຼ່ງນ້ຳ; ການຄວບຄຸມ, ການອ່າຍ, ການຫຼຸດຜ່ອນໄພນ້ຳຖ້ວມ ຫຼື ການດຳເນີນກິດຈະກຳໃດໆທີ່ກໍ່ໃຫ້ເກີດມີການປ່ຽນແປງສະພາບດ້ານກາຍະພາບ ຂອງແຫຼ່ງນ້ຳທຳມະຊາດທັງປະລິມານ ແລະ ຄຸນນະພາບ;
- ອ່າງແມ່ນ້ຳ (ອ່າງຮັບນ້ຳ ໃນກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ສະບັບເລກທີ 02-96, ລົງວັນທີ 11 ຕຸລາ 1996) ໝາຍເຖິງ ຂອບເຂດເນື້ອທີ່ດິນ ແລະ ເນື້ອທີ່ປ່າໄມ້ທຸກຕອນຕັ້ງແຕ່ຍອດນ້ຳຈົນຮອດປາກນ້ຳບ່ອນທີ່ມີສັນປັນນ້ຳ ແລະ ບ່ອນທີ່ເຮັດໃຫ້ເມັດຝົນທີ່ຕົກລົງມາໄຫຼໂຮມກັນເປັນລະບົບແຫຼ່ງນ້ຳ.

## ໝວດທີ II
## ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 4. ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການອ່າງແມ່ນ້ຳ (ຂຽນຫຍໍ້ວ່າ ຄ.ອ.ມ.) ແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ແລະ ມີພາລະບົດບາດເປັນອົງການປະສານງານຊັບພະຍາກອນນ້ຳໃນອ່າງແມ່ນ້ຳພາຍໃຕ້ການຊີ້ນຳຂອງຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວໃນການຄຸ້ມຄອງ, ພັດທະນາ, ອະນຸລັກ, ຟື້ນຟູ ແລະ ນຳໃຊ້ຊັບພະຍາກອນນ້ຳ (ຕໍ່ໄປເອີ້ນວ່າ ການຄຸ້ມຄອງຊັບພະຍາກອນນ້ຳ) ໃນຂອບເຂດອ່າງແມ່ນ້ຳ.

### ມາດຕາ 5. ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການ ອ່າງແມ່ນ້ຳ

ຄະນະກຳມະການ ອ່າງແມ່ນ້ຳ ຂອງແຕ່ລະອ່າງມີໜ້າທີ່ ແລະ ຂອບເຂດສິດດັ່ງນີ້:

5.1 ຄົ້ນຄ້ວາ, ນຳສະເໜີ ທ່ານນາຍົກລັດຖະມົນຕີ ຫລື ລັດຖະບານ ເພື່ອອະນຸມັດແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳພາຍໃນອ່າງແມ່ນ້ຳ;

5.2 ຄົ້ນຄ້ວາ, ນຳສະເໜີ ທ່ານນາຍົກລັດຖະມົນຕີ ຫລື ລັດຖະບານ ເພື່ອອະນຸມັດແຜນການຈັດສັນປະລິມານນ້ຳ, ແຜນການປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ແຜນການຄຸ້ມຄອງ ຄຸນນະພາບນ້ຳ, ແຜນການຟື້ນຟູບູລະນະສະພາບດ້ານກາຍຍະພາບ,ຊີວະພາບ ແລະ ສິ່ງແວດລ້ອມຂອງຊັບພະຍາກອນນ້ຳໃນແມ່ນ້ຳ, ໜອງບຶງ, ນ້ຳໃຕ້ດິນ ແລະ ແຫຼ່ງນ້ຳອື່ນໆໃນອ່າງແມ່ນ້ຳທີ່ກ່ຽວຂ້ອງ;

5.3 ລະດົມ, ຮັບຟັງຄວາມຄິດເຫັນ ຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ການພັດທະນາຊັບພະຍາກອນນ້ຳໃນອ່າງແມ່ນ້ຳ ເພື່ອເປັນບ່ອນອີງໃນການສະເໜີປັບປຸງແກ້ໄຂ ແລະ ສິ່ງເສີມຕາມຄວາມເໝາະສົມ; ພິຈາລະນາຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນນ້ຳເພື່ອກຳນົດວິທີການແກ້ໄຂຕາມລະບຽບການ ແລະ ນຳສະເໜີວິທີການແກ້ໄຂໃຫ້ຂັ້ນເທິງພິຈາລະນາໃນກໍລະນີບໍ່ສາມາດແກ້ໄຂໄດ້; ສະເໜີຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການປະຕິບັດວິໃນຕໍ່ຜູ້ລະເມີດ;

5.4 ພິຈາລະນາຮັບຮອງຮ່າງແຜນການ ແລະ ໂຄງການພັດທະນາອ່າງແມ່ນ້ຳ ເພື່ອນຳສະເໜີຕໍ່ຂັ້ນເທິງພິຈາລະນາອະນຸມັດ, ຊີ້ນຳການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

5.5 ໃຫ້ຄຳປຶກສາ, ປະກອບຄຳເຫັນຕໍ່ຂັ້ນເທິງ ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ແລະ ບັນຫາກ່ຽວກັບຊັບພະຍາກອນນ້ຳຈາກບັນດາໂຄງການພັດທະນາທີ່ມີຜົນກະທົບຢ່າງຫຼວງຫຼາຍພາຍໃນອ່າງແມ່ນ້ຳ ເພື່ອນຳສະເໜີ ຕໍ່ ຂັ້ນເທິງພິຈາລະນາ;

5.6 ຮັບຮອງ ແລະ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ຂອງຄະນະກຳມະການອ່າງແມ່ນ້ຳ ແລະ ສະຫຼຸບລາຍງານຢ່າງເປັນປົກກະຕິ;

5.7 ຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ ກ່ຽວກັບວຽກງານການຄຸ້ມຄອງຊັບພະຍາກອນນ້ຳ; ເຂົ້າຮ່ວມການພົບປະເຈລະຈາ ແລະ ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກກ່ຽວກັບວຽກງານຊັບພະຍາກອນນ້ຳໃນອ່າງແມ່ນ້ຳ; ໄປເຄື່ອນໄຫວພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີຈາກຂັ້ນເທິງ;

5.8 ດຳເນີນກອງປະຊຸມສະໄໝສາມັນປີໜຶ່ງສອງຄັ້ງ ແລະ ຮຽກໂຮມກອງປະຊຸມສະໄໝວິສາມັນ ຖ້າເຫັນວ່າມີຄວາມຈຳເປັນໂດຍປະທານ ແລະ ຮອງປະທານສາມາດນຳເອົາພະນັກງານວິຊາການຈາກຂະແໜງການກ່ຽວຂ້ອງທີ່ຈຳເປັນຂອງຕົນ ເຂົ້າຮ່ວມໃນກອງປະຊຸມສະໄໝສາມັນ ແລະ ວິສາມັນໄດ້;

5.9 ເຊີນຜູ້ຕາງໜ້າ ຂອງຂະແໜງການ, ທ້ອງຖິ່ນທີ່ກ່ຽວຂ້ອງ, ຊ່ຽວຊານ, ທີ່ປຶກສາ, ຜູ້ຕາງໜ້າຂອງ ອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການອ່າງແມ່ນ້ຳ ຖ້າເຫັນວ່າ ມີຄວາມຈຳເປັນ;

5.10 ສ້າງຕັ້ງໜ່ວຍປະຕິບັດງານສະເພາະກິດຂຶ້ນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າບັນຫາສະເພາະໃດໜຶ່ງ;

5.11 ສະເໜີປັບປຸງໂຄງປະກອບການຈັດຕັ້ງ ແລະ ກົງຈັກຊ່ວຍວຽກ ຂອງຄະນະກຳມະການອ່າງແມ່ນ້ຳ ຖ້າເຫັນວ່າມີຄວາມຈຳເປັນ;

5.12 ຊີ້ນຳການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງ ແລະ ພັດທະນາອ່າງແມ່ນ້ຳ;

5.13 ປະຕິບັດໜ້າທີ່ ແລະ ສິດ ອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 6. ໂຄງປະກອບບຸກຄະລາກອນ.**

6.1 ຄະນະກຳມະການອ່າງແມ່ນ້ຳແຕ່ລະອ່າງ ປະກອບດ້ວຍປະທານ,ຮອງປະທານ ແລະ ຄະນະກຳມະການຈຳ ນວນໜຶ່ງຊຶ່ງເປັນຜູ້ຕາງໜ້າຈາກພາກລັດ, ພາກເອກະຊົນ ແລະ ພາກສ່ວນ ອື່ນໆ ທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນດັ່ງນີ້:

| | |
|---|---|
| 1. ເຈົ້າແຂວງ ຂອງແຂວງໃດແຂວງໜຶ່ງ | ເປັນປະທານ; |
| 2. ຮອງເຈົ້າແຂວງ ຂອງບັນດາແຂວງ ທີ່ຕັ້ງຢູ່ໃນອ່າງແມ່ນ້ຳ | ເປັນຮອງປະທານ; |
| 3. ຮອງຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ | ເປັນຮອງປະທານ; |
| 4. ຜູ້ຕາງໜ້າ ຂັ້ນກົມ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ | ເປັນຄະນະ; |
| 5. ຜູ້ຕາງໜ້າຂັ້ນກົມ ຈາກກະຊວງພະລັງງານ ແລະ ບໍ່ແຮ່ | ເປັນຄະນະ; |
| 6. ຜູ້ຕາງໜ້າ ຂັ້ນກົມ ຈາກອົງການຄຸ້ມຄອງທີ່ດິນ ແຫ່ງຊາດ | ເປັນຄະນະ; |
| 7. ຫົວໜ້າກົມຊັບພະຍາກອນນ້ຳ | ເປັນຄະນະ; |
| 8. ຫົວໜ້າກົມອຸຕຸນິຍົມ ແລະ ອຸທົກກະສາດ | ເປັນຄະນະ; |
| 9. ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ຈາກບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ | ເປັນຄະນະ; |

10. ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ຈາກບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
11. ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
12. ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
13. ຫົວໜ້າພະແນກສາທາລະນະສຸກ ຈາກ ບັນດາແຂວງທີ່ນອນຢູ່ໃນ ອ່າງແມ່ນ້ຳ ເປັນຄະນະ;
14. ຫົວໜ້າອົງການຄຸ້ມຄອງທີ່ດິນ ຈາກບັນດາແຂວງທີ່ນອນຢູ່ໃນ ອ່າງແມ່ນ້ຳ ເປັນຄະນະ;
15. ຫົວໜ້າຫ້ອງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
16. ຜູ້ຕາງໜ້າ ຈາກ ກຸ່ມພັດທະນາພະລັງງານໄຟຟ້າ ທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
17. ຜູ້ຕາງໜ້າ ຈາກ ກຸ່ມພັດທະນາບໍ່ແຮ່ ທີ່ນອນຢູ່ອ່າງແມ່ນ້ຳ ເປັນຄະນະ;
18. ຜູ້ຕາງໜ້າ ຈາກ ກຸ່ມພັດທະນາອຸດສາຫະກຳ ທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
19. ຜູ້ຕາງໜ້າ ຈາກ ກຸ່ມພັດທະນາກະສິກຳ ທີ່ນອນຢູ່ໃນອ່າງແມ່ນ້ຳ ເປັນຄະນະ;
20. ຜູ້ຕາງໜ້າ ຈາກຊຸມຊົນໃນເຂດອ່າງແມ່ນ້ຳ ເປັນຄະນະ;
21. ຜູ້ຕາງໜ້າແນວໂຮມ,ບັນດາອົງການຈັດຕັ້ງມະຫາຊົນໃນເຂດອ່າງແມ່ນ້ຳ ເປັນຄະນະ.

6.2 ຄະນະກຳມະການອ່າງແມ່ນ້ຳມີອາຍຸການ ສະໄໝລະ 5 ປີ ຕາມວາລະການໝູນວຽນ ຂອງປະທານ ໂດຍເລີ່ມຈາກແຂວງໃດໜຶ່ງ ຕາມການຕົກລົງ ຂອງບັນດາແຂວງທີ່ນອນຢູ່ໃນເຂດອ່າງແມ່ນ້ຳ.

## ມາດຕາ 7. ໜ້າທີ່ ແລະ ຂອບເຂດສິດຂອງປະທານ

ປະທານ ຄະນະກຳມະການອ່າງແມ່ນ້ຳມີໜ້າທີ່ ແລະ ຂອບເຂດສິດດັ່ງນີ້:

7.1 ຊີ້ນຳການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານ ຂອງຄະນະກຳມະການອ່າງແມ່ນ້ຳໃນແຕ່ລະໄລຍະ; ລາຍງານການເຄື່ອນໄຫວວຽກງານ ຂອງຄະນະກຳມະການອ່າງແມ່ນ້ຳ ຢ່າງເປັນປົກກະຕິ ຕໍ່ຂັ້ນເທິງ;

7.2 ຊີ້ນຳ ການຈັດຕັ້ງປະຕິບັດແຜນການ ແລະ ໂຄງການຄຸ້ມຄອງອ່າງແມ່ນ້ຳໃນແຕ່ລະໄລຍະ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ຢ່າງເປັນປົກກະຕິ ຕໍ່ຂັ້ນເທິງ;

7.3 ເປັນປະທານກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນ ຂອງຄະນະກຳມະການອ່າງແມ່ນ້ຳ;

7.4 ເຂົ້າຮ່ວມກອງປະຊຸມ, ພົບປະເຈລະຈາ ແລະ ເຊັນສັນຍາ ກ່ຽວກັບວຽກງານຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ຕາມການມອບໝາຍຂອງຂັ້ນເທິງ;

7.5 ສະເໜີແຕ່ງຕັ້ງບຸກຄະລາກອນໄປຮ່ວມກອງປະຊຸມ,ໄປເຄື່ອນໄຫວວຽກງານຢູ່ພາຍໃນ ແລະ ຕ່າງປະເທດຕາມຂອບເຂດສິດ ຂອງຄະນະກຳມະການອ່າງແມ່ນ້ຳ;

7.6 ແຕ່ງຕັ້ງຄະນະຜູ້ຊ່ວຍວຽກ, ສ້າງຕັ້ງໜ່ວຍປະຕິບັດງານສະເພາະກິດຂຶ້ນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າບັນຫາສະເພາະກິດໃດໜຶ່ງ;

7.7 ແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ຮອງປະທານຕາມຄວາມເໝາະສົມ;

7.8 ຮຽກປະຊຸມສະໄໝສາມັນ ປີໜຶ່ງສອງຄັ້ງ ແລະ ສະໄໝວິສາມັນໃນກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນ;

7.9 ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 8. ໜ້າທີ່ ແລະ ຂອບເຂດສິດ ຂອງ ຮອງປະທານ ແລະ ກໍາມະການ

ຮອງປະທານ ແລະ ກໍາມະການ ອ່າງແມ່ນໍ້າ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

8.1 ຮອງປະທານ ເປັນຜູ້ຊ່ວຍປະທານ ແລະ ຮັບຜິດຊອບລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານ. ໃນກໍລະນີ ປະທານບໍ່ຢູ່, ປະທານ ຈະມອບໃຫ້ຮອງປະທານໃດໜຶ່ງຢ່າງເປັນລາຍລັກອັກສອນເປັນຜູ້ປະຈໍາການແທນ;

8.2 ຮອງປະທານ ແລະ ກໍາມະການທຸກຄົນມີສິດ ແລະ ໜ້າທີ່ ປະກອບຄໍາຄິດຄໍາເຫັນຕໍ່ບັນຫາຕ່າງໆ ລວມທັງແຜນການ, ແຜນງົບປະມານ ແລະ ສັງເກດຕິລາຄາການເຄື່ອນໄຫວ ຂອງຄະນະກໍາມະການອ່າງແມ່ນໍ້າ;

8.3 ຮອງປະທານ ແລະ ກໍາມະການ ມີໜ້າທີ່ລາຍງານ ມະຕິຕົກລົງ ຂອງກອງປະຊຸມ ຄະນະກໍາມະການ ອ່າງແມ່ນໍ້າ ຕໍ່ຂັ້ນນໍາ ຂອງຕົນຊາບ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ບັນລຸຜົນສໍາເລັດ ຕາມລະດັບຄາດໝາຍ ທີ່ໄດ້ວາງໄວ້ ແລ້ວລາຍງານຄືນ ຕໍ່ ຄະນະກໍາມະການ ອ່າງແມ່ນໍ້າ ກ່ຽວກັບ ຜົນສໍາເລັດ ໃນການຈັດຕັ້ງປະຕິບັດ ວຽກງານ ດັ່ງກ່າວ;

8.4 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງປະທານຄະນະກໍາມະການອ່າງແມ່ນໍ້າ.

## ໝວດທີ່ IV
## ໂຄງປະກອບກົງຈັກ ແລະ ກອງເລຂາ

### ມາດຕາ9. ໂຄງປະກອບກົງຈັກ

ຄະນະກໍາມະການອ່າງແມ່ນໍ້າມີກອງເລຂາເປັນກົງຈັກຊ່ວຍວຽກ ຊຶ່ງເປັນຫ້ອງການ ປະຈໍາການຂອງຄະນະ.

### ມາດຕາ10. ທີ່ຕັ້ງ ແລະ ພາລະບົດບາດ ຂອງ ກອງເລຂາ

ກອງເລຂາ ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງ ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ແລະ ມີທີ່ຕັ້ງສໍານັກງານ ຖາວອນ ຢູ່ແຂວງໃດໜຶ່ງຕາມການຕົກລົງ ຂອງ ບັນດາແຂວງ ທີ່ນອນຢູ່ໃນ ອ່າງແມ່ນໍ້າ.

ກອງເລຂາ ມີພາລະບົດບາດ ເປັນເສນາທິການ ແລະ ຊ່ວຍວຽກ ຄະນະກໍາມະການ ອ່າງແມ່ນໍ້າ ໃນການອໍານວຍຄວາມສະດວກ ແລະ ຕິດຕາມກວດກາທຸກການເຄື່ອນໄຫວວຽກງານ ຂອງ ຄະນະກໍາມະການອ່າງແມ່ນໍ້າ.

ກອງເລຂາ ມີຫົວໜ້າ ແລະ ຮອງຫົວໜ້າກອງເລຂາ, ຫົວໜ້າກອງເລຂາ ມີຖານະເທົ່າຫົວໜ້າກົມ. ນອກນັ້ນຍັງມີຫົວໜ້າ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ, ໃນນີ້ລວມທັງພະນັກງານວິຊາການຈາກບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ. ຫົວໜ້າກອງເລຂາໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງຕາມລະບຽບການກຳນົດບົນພື້ນຖານການສະເໜີ ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ໂດຍການປຶກສາຫາລືກັບ ຄະນະກຳມະການອ່າງແມ່ນ້ຳ.

ກອງເລຂາ ຢູ່ໃຕ້ການຊີ້ນຳ, ຄຸ້ມຄອງດ້ານວິຊາການ, ການຈັດຕັ້ງ, ຈຳນວນພົນ ແລະ ງົບປະມານປະຈຳປີ ຂອງອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

ພາຍໃນ ກອງເລຂາ ອະນຸຍາດໃຫ້ມີ ພະແນກ ຫລື ໜ່ວຍງານວິຊາການ ທີ່ຮັບຜິດຊອບ ຂົງເຂດວຽກງານຕ່າງໆ ຕາມຄວາມເໝາະສົມ.

## ມາດຕາ11. ໜ້າທີ່ ແລະ ຂອບເຂດສິດ ຂອງ ກອງເລຂາ

ກອງເລຂາ ຄະນະກຳມະການ ອ່າງແມ່ນ້ຳ ມີໜ້າທີ່ ແລະ ຂອບເຂດສິດຕ່າງໆ ດັ່ງລຸ່ມນີ້:

11.1 ຮ່າງແຜນການ ເຄື່ອນໄຫວວຽກງານ ແລະ ແຜນງົບປະມານປະຈຳປີ ຂອງຄະນະກຳມະການ ອ່າງແມ່ນ້ຳ ເພື່ອນຳສະເໜີຕໍ່ ຄະນະກຳມະການ ອ່າງແມ່ນ້ຳ ພິຈາລະນາ;

11.2 ຮ່າງແຜນການ ແລະ ໂຄງການ ຄຸ້ມຄອງ ອ່າງແມ່ນ້ຳ ໃນແຕ່ລະໄລຍະ ໂດຍມີ ການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳສະເໜີຕໍ່ ຄະນະກຳມະການ ອ່າງແມ່ນ້ຳ ພິຈາລະນາ; ຈັດຕັ້ງປະຕິບັດແຜນການ ແລະ ໂຄງການ ດັ່ງກ່າວ ພາຍຫຼັງທີ່ຂັ້ນເທິງຮັບຮອງເອົາພ້ອມທັງ ສະຫຼຸບລາຍງານ ຢ່າງເປັນປົກກະຕິ;

11.3 ກະກຽມ ສະເໜີ ປະທານຮຽກ ປະຊຸມສະໄໝສາມັນ ຢ່າງເປັນປົກກະຕິ ແລະ ສະໄໝວິສາມັນ ໃນກໍລະນີ ທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ;

11.4 ຈັດກອງປະຊຸມ ສະໄໝສາມັນ ແລະ ສະໄໝວິສາມັນ, ເຊີນປະຊຸມ, ກະກຽມເນື້ອໃນຕາມວາລະຂອງ ກອງປະຊຸມ ແລະ ບັນທຶກລາຍງານ;

11.5 ປະສານງານກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວ ຂອງຄະນະກຳມະການ ອ່າງແມ່ນ້ຳ, ແຜນການ ແລະ ໂຄງການ ຄຸ້ມຄອງ ອ່າງແມ່ນ້ຳ ໃນແຕ່ລະໄລຍະ ແລະ ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດ ວຽກງານ ຢ່າງເປັນປົກກະຕິ;

11.6 ປະສານສົມທົບ ແລະ ສົ່ງເສີມການສ້າງຈິດສຳນຶກ ແລະ ການປຶກສາຫາລື ກ່ຽວກັບຊັບພະຍາກອນນ້ຳ ໃຫ້ແກ່ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ, ຮັບປະກັນການເຂົ້າຮ່ວມ ຂອງພາກສ່ວນຕ່າງໆ ໃນຂະບວນ ການວາງແຜນ ຄຸ້ມຄອງ ແລະ ພັດທະນາ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ;

11.7 ຊຸກຍູ້, ສົ່ງເສີມ, ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດແຜນການ, ໂຄງການ, ລະບຽບການ ແລະ ບົດແນະນຳຕ່າງໆ ຂອງຄະນະກຳມະການ ອ່າງແມ່ນ້ຳ;

11.8 ສັງລວມ, ວິໄຈ ແລະ ເຜີຍແຜ່ ຂໍ້ມູນ-ຂ່າວສານ ກ່ຽວກັບ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ;

11.9 ສຶກສາຄົ້ນຄວ້າ ກ່ຽວກັບ ການຈັດລະດັບຄວາມສຳຄັນ ຂອງການນຳໃຊ້ ຊັບພະຍາກອນນ້ຳ, ການກຳນົດ ປະລິມານການນຳໃຊ້ນ້ຳໃນແຕ່ລະກິດຈະກຳ, ການຈັດສັນນ້ຳ ແລະ ການຮັກສາ ປະລິມານນ້ຳຕ່ຳສຸດໃນອ່າງແມ່ນ້ຳ ເພື່ອນຳສະເໜີຕໍ່ ຄະນະກຳມະການອ່າງແມ່ນ້ຳພິຈາລະນາ;

11.10 ສຶກສາຄົ້ນຄວ້າ ແລະ ນຳສະເໜີ ກ່ຽວກັບ ວິທີການຕ້ານໄພນ້ຳຖ້ວມ, ໄພແຫ້ງແລ້ງ, ການແກ້ໄຂມົນລະພິດທາງນ້ຳ ແລະ ຂໍ້ຂັດແຍ່ງຕ່າງໆ ກ່ຽວກັບ ການພັດທະນາ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ຕໍ່ຄະນະກຳມະການ ອ່າງແມ່ນ້ຳ ພິຈາລະນາ;

11.11 ປະສານສົມທົບ ກັບບັນດາໂຄງການ ພັດທະນາ ທີ່ຢູ່ໃນອ່າງແມ່ນ້ຳ ເພື່ອຫຼີກເວັ້ນ ແລະ ແກ້ໄຂ ຜົນເສຍຫາຍ ຕໍ່ ຊັບພະຍາກອນນ້ຳ;

11.12 ສັງລວມ ແລະ ວິໄຈ ຄວາມຄິດເຫັນ ແລະ ຂໍ້ສະເໜີແນະຕ່າງໆ ກ່ຽວກັບ ການຄຸ້ມຄອງ ແລະ ພັດທະນາ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ເພື່ອນຳສະເໜີຕໍ່ ຄະນະກຳມະການ ອ່າງແມ່ນ້ຳ ພິຈາລະນາ;

11.13 ຄົ້ນຄວ້າ ແລະ ນຳສະເໜີວິທີການແກ້ໄຂຢ່າງເໝາະສົມຕໍ່ກັບຄຳຮ້ອງທຸກ ຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ກ່ຽວກັບ ບັນຫາຂໍ້ຂັດແຍ່ງໃນ ການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ;

11.14 ຈັດຕັ້ງປະຕິບັດ ແຜນການ ແລະ ມາດຕະການ ຕ່າງໆ ໂດຍປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ໃນການຟື້ນຟູບູລະນະ ສະພາບ ດ້ານກາຍະພາບ, ຊີວະພາບ ແລະ ສິ່ງແວດລ້ອມ ຂອງ ຊັບພະຍາກອນນ້ຳ ໃນແມ່ນ້ຳ, ໜອງບຶງ, ນ້ຳໃຕ້ດິນ ແລະ ແຫຼ່ງນ້ຳອື່ນໆ ໃນອ່າງແມ່ນ້ຳ;

11.15 ປະສານສົມທົບ ກັບ ກອງເລຂາ ຄະນະກຳມະການ ແມ່ນ້ຳຂອງ ແຫ່ງຊາດລາວ ແລະ ກອງເລຂາ ຄະນະກຳມະການ ອື່ນໆ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແລະ ບັນດາແຜນງານ ຕ່າງໆ ຂອງ ຄະນະກຳມະການ ແມ່ນ້ຳຂອງ ແຫ່ງຊາດລາວ;

11.16 ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ການຝຶກອົບຮົມ ລະດັບ ຕ່າງໆ, ຕາມການເຫັນດີ ຂອງຂັ້ນເທິງ;

11.17 ກອງເລຂາ ຄະນະກຳມະການ ອ່າງແມ່ນ້ຳ ເຄື່ອນໄຫວວຽກງານ ໂດຍນຳໃຊ້ງົບປະມານ ບໍລິຫານ ປະຈຳປີ ຈາກ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ. ກອງເລຂາ ສາມາດສ້າງຕັ້ງໜ່ວຍງານ ຊ່ວຍວຽກ ແລະ ວ່າຈ້າງພະນັກງານ ຕາມຄວາມຈຳເປັນ;

11.18 ຄຸ້ມຄອງ ແລະ ນຳໃຊ້ກອງທຶນ ຄຸ້ມຄອງ ແລະ ພັດທະນາ ອ່າງແມ່ນ້ຳ ເຂົ້າໃນວຽກງານຕ່າງໆ ຕາມລະບຽບການ ແລະ ແຜນການ ໃນແຕ່ລະໄລຍະທີ່ໄດ້ຮັບການອະນຸມັດ ຈາກຂັ້ນເທິງຂອງ ຄະນະກຳມະການ ອ່າງແມ່ນ້ຳ ວາງອອກ;

11.19 ປະຕິບັດໜ້າທີ່ ແລະ ສິດ ອື່ນໆ ຕາມການມອບໝາຍ ຂອງ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ປະທານ ຄະນະກຳມະການ ແມ່ນ້ຳຂອງ ແຫ່ງຊາດລາວ.

## ໝວດທີ V
## ກອງທຶນ

**ມາດຕາ 12. ກອງທຶນ**

ຄະນະກຳມະການ ອ່າງແມ່ນ້ຳ ແຕ່ລະອ່າງ ມີກອງທຶນຄຸ້ມຄອງ ແລະ ພັດທະນາ ອ່າງແມ່ນ້ຳ ຂອງຕົນເອງ ທີ່ໄດ້ຈາກງົບປະມານ ຂອງລັດ, ການຊ່ວຍເຫຼືອ ຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ, ຄ່າທຳນຽມ, ຄ່າບໍລິການ, ຄ່າປັບໃໝ ແລະ ການປະກອບສ່ວນ ຈາກການພັດທະນາ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ຕາມຫຼັກການ ຜູ້ສ້າງມົນລະພິດ ຕ້ອງເປັນຜູ້ຈ່າຍ. ເນື້ອໃນ ລະອຽດກ່ຽວກັບ ກອງທຶນກຳນົດຕ່າງຫາກ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 13. ລະບອບແບບແຜນວິທີເຮັດວຽກ**

ຄະນະກຳມະການ ອ່າງແມ່ນ້ຳ ແຕ່ລະອ່າງ ເຄື່ອນໄຫວ ແລະ ດຳເນີນງານຕາມ ຫຼັກການ ດັ່ງຕໍ່ໄປນີ້:

13.1 ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງບັນດາສະມາຊິກຄະນະກຳມະການອ່າງແມ່ນ້ຳ;

13.2 ເຮັດວຽກແບບມີແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການຈັດຕັ້ງທີ່ກ່ຽວຂ້ອງ;

13.3 ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;

13.4 ການດຳເນີນກອງປະຊຸມໃນແຕ່ລະຄັ້ງຕ້ອງປະກອບດ້ວຍສະມາຊິກ ຂອງຄະນະກຳມະການອ່າງແມ່ນ້ຳ ບໍ່ຕ່ຳກວ່າເຄິ່ງໜຶ່ງ ຈຶ່ງສາມາດເປີດກອງປະຊຸມໄດ້;

13.5 ທຸກໆກອງປະຊຸມ ຂອງຄະນະກຳມະການອ່າງແມ່ນ້ຳຕ້ອງມີການບັນທຶກ ແລະ ສະຫຼຸບສັງລວມ ຢ່າງຄົບຖ້ວນ ແລະ ເຮັດບົດລາຍງານສົ່ງໃຫ້ປະທານ, ຮອງປະທານ, ກຳມະການ ຂອງ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ ແລະ ບັນດາແຂວງທີ່ນອນຢູ່ໃນອ່າງແມ່ນ້ຳ, ພ້ອມທັງສຳເນົາໃຫ້ຄະນະເລຂາທິການລັດຖະບານ ແລະ ຂະແໜງການ ທີ່ກ່ຽວຂ້ອງ.

**ມາດຕາ 14. ການພົນລະຂະຫຍາຍ**

ມອບໃຫ້ທ່ານຮອງນາຍົກລັດຖະມົນຕີ, ຜູ້ຮັບຜິດຊອບຊີ້ນຳວຽກງານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມເປັນຜູ້ពິກລົງແຕ່ງຕັ້ງລາຍຊື່ບຸກຄົນລະອຽດເຂົ້າໃນຄະນະກຳມະການອ່າງແມ່ນ້ຳແຕ່ລະອ່າງຕາມຕຳແໜ່ງຕ່າງໆ ທີ່ກຳນົດຢູ່ໃນມາດຕາ 6 ຂອງດຳລັດສະບັບນີ້, ບົນພື້ນຖານການສະເໜີ ຂອງທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

**ມາດຕາ 15. ຕາປະທັບ ແລະ ເຄື່ອງໝາຍ**

ຄະນະກຳມະການອ່າງແມ່ນ້ຳ ແລະ ກອງເລຂາຄະນະກຳມະການດັ່ງກ່າວມີຕາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 16. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ບັນດາ ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ